ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-===000===-

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ສູນປ້ອງກັນພືດ ເລກທີ 0105 /ສປພ

ທີ່ ນະຄອນຫຼວງວຽງຈັນ, ວັນທີ 29 MAR 2012

## ແຈ້ງການ

**ຮຽນ**: ທ່ານ ຫົວໜ້າຂະແໜງປູກຝັງແຂວງ, ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ໃນຂອບເຂດທົ່ວປະເທດ.

**ເລື່ອງ**: ແຈ້ງການກ່ຽວກັບການປ້ອງກັນ ແລະເຝົ້າລະວັງການລະບາດຂອງເພ້ຍແປ້ງສີບົວ Pinkmealy bug (*Phenacocus mannihoti* )

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມປູກຝັງ ສະບັບເລກທີ 1058/ກປ ລົງວັນທີ 28/10/2007.
- ອີງຕາມ ຂໍ້ຕົກລົງຂອງກົມປູກຝັງວ່າດ້ວຍການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຂອງສູນປ້ອງ ກັນພືດ ສະບັບເລກທີ 0482/ກປຝ, ລົງວັນທີ 20/05/2009.

ສູນປ້ອງກັນພືດ ຂໍແຈ້ງມາຍັງຂະແໜງປູກຝັງແຂວງ, ນະຄອນຫຼວງ ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ພ້ອມດ້ວຍພໍ່ແມ່ປະຊາຊົນຊາວກະສິກອນທີ່ປູກມັນຕົ້ນ ໃນຂອບເຂດທົ່ວ ປະເທດຊາບວ່າ: ໃນລະດູການຜະລິດມັນຕົ້ນໃນປີ 2012, ປະຈຸບັນນີ້ ບາງທ້ອງຖິ່ນກໍ່ກຳລັງກະກຽມປູກ, ບາງທ້ອງຖິ່ນກໍ່ໄປແລ້ວ, ສະນັ້ນ ຄວນເອົາໃຈໃສ່ສຳຫຼວດຕິດຕາມການທຳລາຍຂອງເພ້ຍແປ້ງສີບົວ ເພາະພົບການທຳລາຍຢູ່ຫຼາຍແຂວງຂອງປະເທດເຮົາເຊັ່ນ: ເມືອງ ໄຊທານີ, ເມືອງປາກງື່ມ ນະຄອນຫຼວງວຽງຈັນ, ເມືອງນະຄອນເພັງ ແຂວງສາລະວັນ, ເມືອງ ໄຊພູທອງ ແຂວງສະຫວັນນະເຂດ, ເມືອງບາຈຽງ ແຂວງຈຳປາສັກ. ເພາະສະນັ້ນ ຊາວກະສິກອນຜູ້ເຮັດການຜະລິດມັນຕົ້ນໃຫ້ໝັ່ນຕິດຕາມເຝົ້າລະວັງ ການທຳລາຍຂອງ ເພ້ຍແປ້ງດັ່ງກ່າວເປັນພິເສດ, ໂດຍສະເພາະແມ່ນໃນຊ່ວງໄລຍະທຳອິດຂອງການຈະເລີນເຕີບໂຕ (1 - 4 ເດືອນ) ມັນຈະສົ່ງຜົນກະທົບຕໍ່ຜົນຜະລິດຫຼາຍກວ່າໄລຍະກາງ (4 - 8 ເດືອນ) ແລະ ໄລຍະປາຍຂອງການຈະເລີນເຕີບໂຕ ( 8 - 12 ເດືອນ), ເພື່ອຮັບປະກັນໃຫ້ໄດ້ຮັບຜົນຜະລິດ ຕາມຄາດໝາຍທີ່ວາງໄວ້ນັ້ນ ການເຝົ້າລະວັງ ແລະ ຕິດຕາມການລະບາດຂອງເພ້ຍແປ້ງສີບົວເປັນວຽກງານໜຶ່ງທີ່ ຕ້ອງເອົາໃຈໃສ່ໃນຊ່ວງໄລຍະນີ້ ເພາະການລະບາດຂອງສັດຕູພືດດັ່ງກ່າວ ແມ່ນມີຜົນກະທົບໂດຍກົງຕໍ່ກັບຜົນຜະລິດ ເຊິ່ງເຮັດໃຫ້ຜົນຜະລິດເສຍຫາຍ ແລະ ບໍ່ໄດ້ຄຸນນະພາບ.

I. ລັກສະນະການທຳລາຍ

ເພ້ຍແປ້ງໂຕອ່ອນ ແລະ ໂຕແກ່ຈະດູດ ກິນນ້ຳລ້ຽງຈາກໃບ, ຍອດ ແລະ ລຳຕົ້ນຂອງມັນຕົ້ນ, ສາມາດສັງ ເກດເຫັນລັກສະນະການທຳລາຍເຊັ່ນ: ຍອດກູດ, ລຳຕົ້ນຄົດງໍ, ຂໍ້ຈະຖີ່ຜິດປົກກະຕິ, ລຳຕົ້ນຕາຍ, ຍອດແຫ້ງ, ບໍ່ມີຫົວ. ຖ້າຫາກພົບເພ້ຍແປ້ງສີບົວ 1 ຈຸດ (ຕົ້ນ) ຢູ່ໃນສວນຖືວ່າມີເພ້ຍແປ້ງຢູ່ໃນສວນປະມານ 4.000 ໂຕ, ຖ້າພົບ 1 - 2 ຈຸດ ຈາກການສຸ່ມ 10 ຕົ້ນ ຈະຕ້ອງໄດ້ໝັ່ນກວດກາຕິດຕາມເພື່ອເຝົ້າລະວັງການລະບາດ, ຖ້າຫາກພົບ 3 ຕົ້ນຂຶ້ນໄປ ຈາກການສຸ່ມ 10 ຕົ້ນ ໃຫ້ຖືວ່າເປັນເຂດລະບາດຂອງເພ້ຍແປ້ງສີບົວໄດ້

II. ວິທີການປ້ອງກັນ ແລະ ກຳຈັດ

- ວິທີການປ້ອງກັນ

  - ເລືອກທ່ອນພັນທີ່ປາດສະຈາກເພ້ຍແປ້ງສີບົວຈາກແຫຼ່ງທີ່ເຊື່ອຖືໄດ້ມາປູກ
  - ໄຖດິນຕາກແດດໄວ້ປະມານ 14 ວັນ ເພື່ອທຳລາຍສັດຕູພືດ
  - ເກັບສິ້ນສ່ວນຕ່າງໆ ຂອງມັນຕົ້ນຢູ່ພື້ນທີ່ຈະປູກມັນຕົ້ນມາທຳລາຍຖິ້ມ (ເຜົາໄຟ)
  - ແຊ່ທ່ອນພັນ ດ້ວຍຢາເຄມີ Imidacloprid (70 % NG) ຫຼື Thiamethoxam (25 % WG), ໃນອັດຕາ 4g/ນ້ຳ 20 ລິດ ຫຼື Dinotefuran (10 % WP) 40 g/ນ້ຳ 20 ແຊ່ທ່ອນພັນ 5 - 10 ນາທີ ແລ້ວນຳໄປຕາກລົມຢູ່ໃນບ່ອນຮົ່ມໃຫ້ແຫ້ງ ກ່ອນນຳໄປປູກສາມາດຂ້າເພ້ຍແປ້ງທີ່ຕິດມາກັບທ່ອນພັນໄດ້ ແລະ ຍັງສາມາດປ້ອງກັນການເຂົ້າທຳລາຍຂອງເພ້ຍແປ້ງຫຼັງການປູກໄດ້ອີກປະມານ 1 ເດືອນ.
  - ໝັ່ນລົງ ສຳຫຼວດຕິດຕາມສວນມັນຕົ້ນເປັນປະຈຳທຸກອາທິດ ຖ້າພົບເພ້ຍແປ້ງ 3 ຕົ້ນຈາກການສຸ່ມ 10 ຕົ້ນໃຫ້ຫາທາງປ້ອງກັນກຳຈັດທັນທີ ແລະ ສາມາດປະກາດເປັນພື້ນທີ່ລະບາດໄດ້.
  - ເອົາໃຈໃສ່ດູແລຮັກສາ, ເສຍຫຍ້າ, ໃສ່ຝຸ່ນໃຫ້ມັນຕົ້ນມີຄວາມສົມບູນ ແລະ ແຂງແຮງເພື່ອຕ້ານ ທານກັບພະຍາດ ແລະ ແມງໄມ້.
  - ອະນຸລັກແມງໄມ້ເປັນປະໂຫຍດ ເຊັ່ນ: ແມງຊ້າງປີກໃສ Lacewing, ແມງເຕົ່າທອງ Lady bird.

- ວິທີການກຳຈັດ

1. ໃຫ້ໝັ່ນລົງສຳຫຼວດຕິດຕາມສວນມັນຕົ້ນເປັນປະຈຳ ນັບແຕ່ຕົ້ນມັນມີອາຍຸໄດ້ 1 - 4 ເດືອນ ຖ້າມີການລະບາດຂອງເພ້ຍແປ້ງໜ້ອຍໃຫ້ຕັດສ່ວນທີ່ມີເພ້ຍແປ້ງອອກ ເພື່ອໃຫ້ມັນຕົ້ນໄດ້ແຕກຍອດໃໝ່ ແລ້ວນຳເອົາສ່ວນດັ່ງກ່າວມາເຜົາທຳລາຍຖິ້ມແຕ່ຖ້າມີການລະບາດຂອງເພ້ຍແປ້ງກາຍ 50 % ໃຫ້ຫຼົກກົກມັນຕົ້ນກອງລວມກັນແລ້ວ ເຜົາທຳລາຍຖິ້ມ, ຖ້າລະບາດຮ້າຍແຮງໄຖດິນຕາກແດດປະມານ 1 ເດືອນ ປູກພືດອື່ນທົດແທນເພື່ອຕັດວົງຈອນຊີວິດຂອງເພ້ຍແປ້ງ.

2. ຖ້າມັນຕົ້ນອາຍຸ 4 - 8 ເດືອນ ຖ້າມີການລະບາດຂອງເພ້ຍແປ້ງໃຫ້ຕັດສ່ວນທີ່ມີເພ້ຍແປ້ງອອກ ແລ້ວນຳສ່ວນດັ່ງກ່າວມາລວມກັນເຜົາທຳລາຍຖິ້ມ

3. ອາຍຸ 8 ເດືອນຂຶ້ນໄປຖ້າມີການລະບາດໃຫ້ຮີບຮ້ອນເກັບກ່ຽວຜົນຜະລິດຂອງມັນຕົ້ນທັນທີ ແລ້ວໄຖດິນຕາກແດດເພື່ອທຳລາຍເພ້ຍແປ້ງ ແລະ ໄຂ່ຂອງມັນ

4. ປ່ອຍແຕນ ບຽນ *A. Lopezi* 600-1200 ຄູ່ / ha

ດັ່ງນັ້ນ,ຈຶ່ງແຈ້ງມາຍັງຂະແໜງປູກຝັງແຂວງ, ນະຄອນຫຼວງ, ຫົວໜ້າຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ແລະ ຊາວກະສິກອນຜູ້ທີ່ເຮັດການຜະລິດມັນຕົ້ນໄດ້ຮັບຊາບ ແລະ ພ້ອມທັງນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຂົ້າໃນຕົວຈິງຕາມຄວາມເໝາະສົມ.

ໝາຍເຫດ: ຖ້າມີບັນຫາກ່ຽວກັບສັດຕູພືດດັ່ງກ່າວສາມາດພົວພັນໄດ້ຕາມເບີໂທລະສັບ ລຸ່ມນີ້:
ສູນປ້ອງກັນພືດ ໂທ: 021812164.

ຮ. ຫົວໜ້າສູນປ້ອງກັນພືດ

ຕຽງຄຳ ວົງສາບຸດ

ບ່ອນສົ່ງ:
- ພະແນກກັກກັນພືດ 1 ສະບັບ
- ພະແນກລະບຽບການ 1 ສະບັບ
- ຂະແໜງປູກຝັງແຂວງ 1 ສະບັບ
- ເກັບມ້ຽນ 1 ສະບັບ